**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 3624 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2017

# ຂໍ້ຕົກລົງ

## ວ່າດ້ວຍ ມາດຕະການປັບໃໝຕໍ່ຜູ້ລະເມີດກ່ຽວກັບ ອາຊະຍາກຳທາງລະບົບຄອມພິວເຕີ

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ສະບັບເລກທີ 61/ສພຊ ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະການປັບໃໝຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດຢູ່ໃນ ມາດຕາ 60 ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ທີ່ມີພຶດຕິກຳກ່ຽວກັບ ການລຶບຂໍ້ມູນຄອມພິວເຕີ, ການສະໜອງຂໍ້ມູນຄອມພິວເຕີ ທີ່ບໍ່ຖືກຕ້ອງ, ການບໍ່ສະໜອງຂໍ້ມູນຄອມພິວເຕີ ແລະ ພຶດຕິກຳອື່ນ ທີ່ເປັນການຂັດຂວາງ ແລະ ບໍ່ໃຫ້ການຮ່ວມມືຕໍ່ເຈົ້າໜ້າທີ່ຕຳຫຼວດ ໃນການສືບສວນ-ສອບສວນ ເພື່ອນຳເອົາຜູ້ກະທຳຜິດມາລົງໂທດ ແນ່ໃສ່ໃຫ້ສັງຄົມມີຄວາມສະຫງົບ ແລະ ຍຸຕິທຳ ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2 ມາດຕະການປັບໃໝຕໍ່ຜູ້ລະເມີດ ກ່ຽວກັບອາຊະຍາກຳທາງລະບົບຄອມພິວເຕີ**

ມາດຕະການປັບໃໝຕໍ່ຜູ້ລະເມີດ ກ່ຽວກັບອາຊະຍາກຳທາງລະບົບຄອມພິວເຕີ ແມ່ນການກຳນົດອັດຕາປັບໃໝທາງບໍລິຫານຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດ ມາດຕາ 60 ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ.

**ມາດຕາ 3 ອະທິບາຍສັບ**

ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອາຊະຍາກຳ** ໝາຍເຖິງ ການກະທຳຜິດທີ່ໄດ້ກຳນົດໄວ້ໃນ ກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ;

2. **ລະບົບຄອມພິວເຕີ** ໝາຍເຖິງ ອຸປະກອນເອເລັກໂຕຣນິກ ຫຼື ຊຸດອຸປະກອນຂອງຄອມພິວເຕີທີ່ເຊື່ອມຕໍ່ລະບົບການປະຕິບັດການເຂົ້າດ້ວຍກັນ ໂດຍມີການກຳນົດຄຳສັ່ງ, ຊຸດຄຳສັ່ງ ຫຼື ສິ່ງອື່ນໆ ເພື່ອໃຫ້ອຸປະກອນເອເລັກໂຕຣນິກ ຫຼື ຊຸດອຸປະກອນຂອງຄອມພິວເຕີ ເຮັດໜ້າທີ່ປະມວນຜົນຂໍ້ມູນແບບອັດຕະໂນມັດໃນຄອມພິວເຕີໜຶ່ງໜ່ວຍ ຫຼື ຫຼາຍໜ່ວຍ ເຊັ່ນ: ຄອມພິວເຕີສ່ວນບຸກຄົນ, ລະບົບເຊີເວີ, ອຸປະກອນການສື່ສານ ທີ່ເຊື່ອມຕໍ່ຫາກັນຜ່ານເຄືອຂ່າຍຄອມພິວເຕີ ແລະ ເຄືອຂ່າຍອິນເຕີເນັດ;

3. **ຂໍ້ມູນຄອມພິວເຕີ** ໝາຍເຖິງ ຂໍ້ມູນ, ຂໍ້ຄວາມ, ໂປຣແກຣມ ຫຼື ລະບົບຖານຂໍ້ມູນ, ຂໍ້ມູນສ່ວນບຸກຄົນ, ຂໍ້ມູນຈະລາຈອນທາງລະບົບຄອມພິວເຕີ ໃນຮູບແບບທີ່ສາມາດປະມວນຜົນ ແລະ ເຮັດໃຫ້ລະບົບຄອມພິວເຕີເຮັດວຽກໄດ້;

4. **ຂໍ້ມູນສ່ວນບຸກຄົນ** ໝາຍເຖິງ ຂໍ້ມູນທີ່ກ່ຽວຂ້ອງ ຫຼື ບົ່ງບອກເຖິງລັກສະນະ ຫຼື ຕົວຕົນ, ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍທາງກົງ ຫຼື ທາງອ້ອມ;

5. **ລະບົບເຊີເວີ** (Server System) ໝາຍເຖິງ ລະບົບໃຫ້ບໍລິການຜ່ານລະບົບຄອມພິວເຕີ, ປະກອບດ້ວຍຖານຂໍ້ມູນເຊີເວີ (Database Server), ເວັບເຊີເວີ (Web Server), ເມວເຊີເວີ (Mail Server), ຟາຍເຊີເວີ (File Server).

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຄຸ້ມຄອງຂໍ້ມູນຂ່າວສານ ແລະ ອຸປະກອນເອເລັກໂຕຣນິກ ຢູ່ ສປປ ລາວ.

## ໝວດທີ 2
## ພຶດຕິກຳທີ່ເປັນການລະເມີດ

**ມາດຕາ 5 ພຶດຕິກຳທີ່ເປັນການລະເມີດ**

ພຶດຕິກຳທີ່ເປັນການລະເມີດ ມີດັ່ງນີ້:

1. ການສະໜອງຂໍ້ມູນຄອມພິວເຕີ ທີ່ບໍ່ຖືກຕ້ອງ;
2. ການບໍ່ສະໜອງຂໍ້ມູນຄອມພິວເຕີ ຕາມກຳນົດເວລາ;
3. ການລຶບຂໍ້ມູນໃນລະບົບຄອມພິວເຕີ ຫຼື ຂໍ້ມູນຄອມພິວເຕີຂອງຜູ້ອື່ນ ທີ່ບໍ່ໄດ້ຮັບອະນຸຍາດ.

**ມາດຕາ 6 ການສະໜອງຂໍ້ມູນຄອມພິວເຕີທີ່ບໍ່ຖືກຕ້ອງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະໜອງຂໍ້ມູນຄອມພິວເຕີ ແລະ/ຫຼື ອຸປະກອນເອເລັກໂຕຣນິກທີ່ບໍ່ຖືກຕ້ອງ ໃຫ້ເຈົ້າໜ້າທີ່ຕຳຫຼວດ ຫຼື ພະນັກງານທີ່ກ່ຽວຂ້ອງ ຊຶ່ງປະກອບມີຂໍ້ມູນ ດັ່ງນີ້:

1. ຂໍ້ມູນຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກ ທີ່ນຳໃຊ້ກະທຳຄວາມຜິດ;
2. ຂໍ້ມູນຄວາມລັບຂອງອົງການຈັດຕັ້ງ;
3. ຂໍ້ມູນດ້ານຄວາມໝັ້ນຄົງຂອງຊາດ;
4. ຂໍ້ມູນທາງດ້ານການຄ້າ;

5. ຂໍ້ມູນທຸລະກຳທາງການເງິນ;
6. ຂໍ້ມູນທີ່ມີລັກສະນະທຳລາຍການປະຕິບັດງານຂອງລະບົບຄອມພິວເຕີ;
7. ຂໍ້ມູນທີ່ເປັນສິ່ງລາມົກອານາຈານ;
8. ຂໍ້ມູນການຕັດຕໍ່ເນື້ອໃນ, ຮູບ, ພາບເຄື່ອນໄຫວ, ສຽງ ແລະ ວີດີໂອ;
9. ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 7 ການບໍ່ສະໜອງຂໍ້ມູນຄອມພິວເຕີຕາມກຳນົດເວລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຂໍ້ມູນກ່ຽວຂ້ອງກັບ ການກະທຳຜິດທາງລະບົບຄອມພິວເຕີ ແຕ່ບໍ່ສະໜອງຂໍ້ມູນດັ່ງກ່າວ ໃຫ້ອົງການສືບສວນ-ສອບສວນ ຕາມກຳນົດເວລາ.

ເຈົ້າໜ້າທີ່ຕຳຫຼວດ ຈະເຮັດໜັງສືສະເໜີຫາ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສະໜອງຂໍ້ມູນຫຼັກຖານ ເພື່ອນຳໄປດຳເນີນຄະດີຕໍ່ຜູ້ກະທຳຜິດ.

**ມາດຕາ 8 ການລຶບຂໍ້ມູນໃນລະບົບຄອມພິວເຕີ ຫຼື ຂໍ້ມູນຄອມພິວເຕີຂອງຜູ້ອື່ນທີ່ບໍ່ໄດ້ຮັບອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລຶບຂໍ້ມູນໃນລະບົບຄອມພິວເຕີ ຫຼື ຂໍ້ມູນຄອມພິວເຕີຂອງຜູ້ອື່ນທີ່ບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ ຫຼື ຜູ້ທີ່ໄດ້ຮັບມອບສິດໃຫ້ຄຸ້ມຄອງຂໍ້ມູນ ຊຶ່ງຂໍ້ມູນດັ່ງກ່າວປະກອບມີ ດັ່ງນີ້:

1. ຊື່ບັນຊີ ແລະ ລະຫັດຜ່ານທີ່ກ່ຽວຂ້ອງ;
2. ຊອບແວທີ່ນຳໃຊ້ໃນລະບົບຄອມພິວເຕີ;
3. ຟາຍຂອງລະບົບຄອມພິວເຕີ ( System File );
4. ຟາຍເອກະສານຕ່າງໆ;
5. ຂໍ້ມູນບັນທຶກການເຂົ້າ-ອອກ ລະບົບຄອມພິວເຕີ ( Log File );
6. ປະຫວັດການນຳໃຊ້ອິນເຕີເນັດ ( Web Browser History );
7. ຂໍ້ມູນທີ່ບັນທຶກໄວ້ໃນລະບົບເຊີເວີ (Server System) ແລະ ອຸປະກອນເອເລັກໂຕຣນິກ ອື່ນໆ;
8. ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງ.

## ໝວດທີ 3
## ອັດຕາການປັບໃໝ

**ມາດຕາ 9 ອັດຕາປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ການສະໜອງຂໍ້ມູນຄອມພິວເຕີ ທີ່ບໍ່ຖືກຕ້ອງ ຈະຖືກປັບໃໝ ແຕ່ 1.500.000 ກີບ ຫາ 2.000.000 ກີບ;

2. ການບໍ່ສະໜອງຂໍ້ມູນຄອມພິວເຕີ ຕາມກຳນົດເວລາ ຈະຖືກປັບໃໝ ແຕ່ 2.500.000 ຫາ 3.000.000 ກີບ;

3. ການລຶບຂໍ້ມູນໃນລະບົບຄອມພິວເຕີ ຫຼື ຂໍ້ມູນຄອມພິວເຕີຂອງຜູ້ອື່ນ ທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 4.000.000 ກີບ ຫາ 5.000.000 ກີບ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມອບໃຫ້ສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫລັງ ທີ່ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ